ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 845/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 ກັນຍາ 2018

# ຂໍ້ຕົກລົງ
# ວ່າດ້ວຍມາດຕະການຕໍ່ການລະເມີດ
# ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012;
- ອີງຕາມດຳລັດວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999;
- ອີງຕາມດຳລັດວ່າດ້ວຍທຸລະກິດຊວດຈຳ ສະບັບເລກທີ 248/ລບ, ລົງວັນທີ27 ກໍລະກົດ 2016;
- ອີງຕາມຂໍ້ກຳນົດວ່າດ້ວຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນທີ 20 ມິຖຸນາ 2008;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງສະຖາບັນການເງິນ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະການຕໍ່ກັບຜູ້ລະເມີດບັນດາລະບຽບການໃນການຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ເພື່ອເປັນການຍົກສູງສະຕິໃນການປະຕິບັດລະບຽບ ແລະ ກົດໝາຍ, ຮັບປະກັນໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີຄວາມເຕີບໃຫຍ່, ເຂັ້ມແຂງ, ປອດໄພ ແລະ ໝັ້ນຄົງ.

**ມາດຕາ 2 ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຊຶ່ງກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ປະກອບດ້ວຍ:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ);
2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ (ສກຈບ);
3. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ);
4. ໂຮງຊວດຈໍາ;
5. ບໍລິສັດເຊົ່າສິນເຊື່ອ.

**ມາດຕາ 3 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ທີ່ລະເມີດລະບຽບການໃນການຄຸ້ມຄອງທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 4 ການລະເມີດ**

ການລະເມີດຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ໃນຂໍ້ຕົກລົງສະບັບນີ້ ລວມມີ:

1. ລະເມີດ ກ່ຽວກັບການຂໍອະນຸຍາດດໍາເນີນທຸລະກິດ ແລະ ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດ ເປັນຕົ້ນ:
   - ໄດ້ຮັບອະນຸຍາດດໍາເນີນທຸລະກິດ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ຂໍ້ມູນທີ່ສະໜອງດັ່ງກ່າວ ມີຄວາມສໍາຄັນຊຶ່ງຈະພາໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານບໍ່ໝັ້ນຄົງ;
   - ບໍ່ດໍາເນີນທຸລະກິດຂອງຕົນ ພາຍໃນກໍານົດ 90 ວັນ ນັບແຕ່ວັນໄດ້ຮັບອະນຸຍາດດໍາເນີນທຸລະກິດເປັນຕົ້ນໄປ;
   - ດໍາເນີນທຸລະກິດບໍ່ຖືກຕ້ອງຕາມການອະນຸຍາດ;
   - ໃຫ້ບຸກຄົນອື່ນນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ.
2. ຂະຫຍາຍສາຂາ, ໜ່ວຍບໍລິການ, ຍົກຍ້າຍທີ່ຕັ້ງສໍານັກງານ, ກູ້ຢືມເງິນ, ເພີ່ມທຶນ, ເພີ່ມຜະລິດຕະພັນ, ປ່ຽນແປງຂາຮຸ້ນ, ປ່ຽນແປງຄະນະບໍລິຫານ, ປັບປຸງກົດລະບຽບພາຍໃນ ແລະ ໂຄງຮ່າງການຈັດຕັ້ງ ໂດຍບໍ່ໄດ້ຮັບການເຫັນດີຈາກທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ;
3. ລະເມີດຂໍ້ຫ້າມໃນການດໍາເນີນທຸລະກິດ ທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ;
4. ລະເມີດມາດຕະການຮັກສາຄວາມໝັ້ນຄົງ ຕາມການກໍານົດຂອງ ທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ;
5. ລະເມີດກ່ຽວກັບການປະຕິບັດ ລະບົບບັນຊີ ແລະ ລະບອບລາຍງານ ໃຫ້ທະນາຄານແຫ່ງ ສປປ ລາວ;
6. ລະເມີດການຖອກທຶນຈົດທະບຽນ ແລະ ນໍາໃຊ້ທຶນຈົດທະບຽນ;

7. ການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ໃຫ້ຄວາມຮ່ວມມື, ບໍ່ສະໜອງເອກະສານຕາມກຳນົດເວລາ ແລະ ບໍ່ປະຕິບັດຕາມຄຳແນະນຳຂອງຄະນະກວດກາ ຈາກທະນາຄານແຫ່ງ ສປປ ລາວ ຫຼື ຜູ້ກວດສອບພາຍນອກ;
8. ການບໍ່ປະຕິບັດຄຳສັ່ງ, ບົດແນະນຳ, ແຈ້ງເຕືອນ ແລະ ແຈ້ງການຕ່າງໆ ຂອງ ທະນາຄານແຫ່ງ ສປປ ລາວ;
9. ລະເມີດບັນດາລະບຽບການ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 5 ມາດຕະການຕໍ່ການລະເມີດ

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຫາກລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ຈະຖືກປະຕິບັດມາດຕະການ ດັ່ງລຸ່ມນີ້:

1. ມາດຕະການ ຄັ້ງທີ 1:
   - ກ່າວເຕືອນເປັນລາຍລັກອັກສອນ;
   - ເຊີນເຂົ້າມາສຶກສາອົບຮົມ.
2. ມາດຕະການ ຄັ້ງທີ 2:

   ແຈ້ງເຕືອນຢ່າງເປັນລາຍລັກອັກສອນ ຄັ້ງທີ 2, ພ້ອມທັງປັບໃໝ ຈຳນວນ 10.000.000 ກີບ.
3. ມາດຕະການ ຄັ້ງທີ 3:
   - ພາຍຫຼັງທີ່ຖືກປະຕິບັດ ມາດຕະການ ຄັ້ງທີ 2, ແຕ່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຍັງບໍ່ມີການປັບປຸງແກ້ໄຂ, ທະນາຄານແຫ່ງ ສປປ ລາວ ຈະແຈ້ງໂຈະການດຳເນີນທຸລະກິດຊົ່ວຄາວ ເປັນເວລາ 180 ວັນ;
   - ພາຍຫຼັງ 180 ວັນ ທີ່ໄດ້ຖືກແຈ້ງໂຈະການດຳເນີນທຸລະກິດຊົ່ວຄາວ, ແຕ່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຍັງບໍ່ມີການປັບປຸງແກ້ໄຂ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ແລະ ດຳເນີນການຊຳລະສະສາງ ຕາມລະບຽບການ.

### ມາດຕາ 6 ຮູບການກ່າວເຕືອນ ແລະ ປັບໃໝ

ການກ່າວເຕືອນ ແລະ ປັບໃໝ ຕ້ອງປະຕິບັດດັ່ງລຸ່ມນີ້:

1. ການກ່າວເຕືອນຕ້ອງເຮັດເປັນລາຍລັກອັກສອນ ປະກອບດ້ວຍເນື້ອໃນ ດັ່ງນີ້:
   - ຊື່ ສະຖາບັນທີ່ຖືກກ່າວເຕືອນ;
   - ເນື້ອໃນຂອງການລະເມີດ;
   - ກຳນົດເວລາປັບປຸງແກ້ໄຂ;
   - ມາດຕະການພາຍຫຼັງກ່າວເຕືອນຫາກສືບຕໍ່ລະເມີດ.

2. ການປັບໃໝຕ້ອງເຮັດເປັນລາຍລັກອັກສອນ ປະກອບດ້ວຍເນື້ອໃນ ດັ່ງນີ້:

- ຊື່ສະຖາບັນທີ່ຖືກປັບໃໝ;
- ເນື້ອໃນຂອງການລະເມີດ;
- ຈຳນວນຄັ້ງທີ່ປັບໃໝ;
- ຈຳນວນເງິນທີ່ປັບໃໝ;
- ກຳນົດເວລາປັບປຸງແກ້ໄຂ;
- ມາດຕະການພາຍຫຼັງທີ່ຖືກປັບໃໝ ຫາກສືບຕໍ່ລະເມີດ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງສະຖາບັນການເງິນ ແລະ ສາຂາ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ເປັນເຈົ້າການໃນການຈັດຕັ້ງປະຕິບັດ, ຕິດຕາມກວດກາ, ດຳເນີນການກ່າວເຕືອນ ແລະ ປັບໃໝ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ລະເມີດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ບັນດາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຜູ້ຖືຮຸ້ນ, ຜູ້ບໍລິຫານ, ທີ່ປຶກສາ ແລະ ພະນັກງານຂອງບັນດາສະຖາບັນການເງິນດັ່ງກ່າວ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຮັກສາການ**ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

ສອນໄຊ ສິດພະໄຊ